**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----------------------

**ເຈົ້າແຂວງ** ເລກທີ..179../ຈຂ.ບກ

ບໍ່ແກ້ວ, ວັນທີ..1..ມີນ..2016.

## ຄຳສັ່ງແນະນຳ
## ຂອງເຈົ້າແຂວງໆບໍ່ແກ້ວ
## ວ່າດ້ວຍການຄຸ້ມຄອງນຳໃຊ້ການບໍລິການລານຈອດຢູ່ໃນດ່ານສາກົນຂົວມິດຕະພາບ 4

**ເຖິງ:** ບັນດາຫົວໜ້າພະແນກການ, ອົງການອ້ອມຂ້າງແຂວງ, ບັນດາເມືອງ, ຫົວໜ້າດ່ານສາກົນ, ຫົວໜ້າດ່ານພາສີປະຈຳດ່ານສາກົນມິດຕະພາບ4, ບັນດາບໍລິສັດຂົນສົ່ງ, ຜູ້ປະກອບການ ແລະ ພາກສ່ວນກ່ຽວຂ້ອງກັບການຂົນສົ່ງສິນຄ້າທີ່ນຳເຂົ້າ-ສົ່ງອອກ ຜ່ານດ່ານສາກົນຂົວມິດຕະພາບແຫ່ງທີ 4 ແຂວງບໍ່ແກ້ວ.

**ເລື່ອງ:** ການເປີດນຳໃຊ້ບໍລິການລານຈອດ ຢູ່ໃນດ່ານສາກົນຂົວມິດຕະພາບແຫ່ງທີ 4 ນັບແຕ່ວັນທີ 01/03/2016 ເປັນຕົ້ນໄປ ພ້ອມຈັດເກັບຄ່າບໍລິການລານຈອດພັກສາງ ແລະ ຄ່າຄຸ້ມຖ່າຍສິນຄ້າ.

- **ອີງຕາມ** ຂໍ້ຕົກລົງຂອງເຈົ້າແຂວງ ແຂວງບໍ່ແກ້ວ ສະບັບເລກທີ 157/ຈຂ.ບກ. ລົງວັນທີ 19 ກຸມພາ 2016 ວ່າດ້ວຍການເຫັນດີໃຫ້ ລລບສ ຮ່ວມກັບແຂວງ ເຂົ້ານຳໃຊ້ບໍລິການລານຈອດລົດສິນຄ້າ, ເຄື່ອງຂອງ ຢູ່ໃນດ່ານສາກົນຂົວມິດຕະພາບ 4 ແລະ ພັດທະນາເນື້ອທີ່ດິນນອກຮົ້ວດ່ານ.
- **ອີງຕາມ** ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະກຳມະການຄຸ້ມຄອງການກໍ່ສ້າງສາງກາງແຈ້ງຢູ່ໃນດ່ານສາກົນຂົວມິດຕະພາບແຫ່ງທີ 4.
- **ອີງຕາມ** ບົດບັນທຶກກອງປະຊຸມຂອງ ຄະນະກຳມະການຄຸ້ມຄອງການກໍ່ສ້າງສາງກາງແຈ້ງຢູ່ໃນດ່ານສາກົນຂົວມິດຕະພາບແຫ່ງທີ 4 ລົງວັນທີ 22/02/2016.

**ເຈົ້າແຂວງໆບໍ່ແກ້ວ ອອກຄຳສັ່ງແນະນຳດັ່ງນີ້:**

1. ມອບໃຫ້ພະແນກການເງິນແຂວງ ແລະ ລລບສ ເປີດນຳໃຊ້ບໍລິການ ລານຈອດລົດສິນຄ້າ ຢູ່ໃນດ່ານສາກົນຂົວມິດຕະພາບແຫ່ງທີ 4 ນັບແຕ່ມື້ວັນທີ 01/03/2016 ເປັນຕົ້ນໄປ.

2. ເກັບຄ່າບໍລິການຈອດພັກສາງ ແລະ ຄຸ່ມຖ່າຍສິນຄ້າ ທີ່ນຳໃຊ້ລານຈອດລົດ ຢູ່ໃນດ່ານສາກົນຂົວມິດຕະພາບແຫ່ງທີ 4 ຕາມແຈ້ງການຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1291/ກຄ.ພນ ລົງວັນທີ 05/08/2008 ດັ່ງລຸ່ມນີ້:

| ລ/ດ | ເນື້ອໃນລາຍການ | ຫົວໜ່ວຍ ຄິດໄລ່ | ລາຄາ ຄິດໄລ່ກີບ | ໝາຍເຫດ |
|---|---|---|---|---|
| 1/ | **ຄ່າບໍລິການລານຈອດ ແລະ ພັກສາງ** | | | ລາຄາຄິດໄລ່ເກັບ |
| | - ລົດບັນທຸກສິນຄ້າປະເພດ.ພວງ/ເທເລີ | ຄັນ/ຖ້ຽວ | 118,000 | ເງິນຕາມປະເພດລົດນີ້ |
| | - ລົດບັນທຸກສິນຄ້າປະເພດ 12 ລໍ້ | ຄັນ/ຖ້ຽວ | 102,000 | ແມ່ນພັກຢູ່ໃນລານຈອດ |
| | - ລົດບັນທຸກສິນຄ້າປະເພດ 10 ລໍ້ | ຄັນ/ຖ້ຽວ | 72,000 | ພາຍໃນກຳນົດ3ວັນຖ້າ |
| | - ລົດບັນທຸກສິນຄ້າປະເພດ 6 ລໍ້ | ຄັນ/ຖ້ຽວ | 64,000 | ກາຍກຳນົດແມ່ນຈະ |
| | - ລົດບັນທຸກສິນຄ້າປະເພດ 4 ລໍ້ | ຄັນ/ຖ້ຽວ | 40,000 | ຄິດໄລ່ຄ່າຝາກເພີ່ມຕື່ມ |

3. ຖ້າຫາກມີການຄຸ່ມຖ່າຍດ້ວຍກົນຈັກຍົກຍໍ ການເກັບຄ່າບໍລິການແມ່ນຄິດໄລ່ເກັບ ຕາມແຈ້ງການເລກທີ 1291/ກຄ.ພນ, ລົງວັນທີ 05/08/2008 ຂອງກະຊວງອຸດສາຫະກຳ ແລະ ການຄ້າ.

4. ມອບໃຫ້ຄະນະກຳມະການທີ່ຖືກແຕ່ງຕັ້ງ ແລະ ເຈົ້າໜ້າທີ່ພາສີປະຈຳດ່ານສາກົນຂົວມິດຕະພາບແຫ່ງທີ 4 ເຜີຍແຜ່ຄຳສັ່ງແນະນຳສະບັບນີ້ ໃຫ້ບັນດາບໍລິສັດ, ຜູ້ປະກອບການ ແລະ ໜ່ວຍງານທີ່ກ່ຽວຂ້ອງຮັບຊາບ ເພື່ອພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

5. ຜ່ານການຈັດຕັ້ງປະຕິບັດມີຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກແນວໃດ ໃຫ້ບັນດາໜ່ວຍງານຕ່າງໆປະຈຳດ່ານສາກົນລາຍງານການນຳແຂວງບໍ່ແກ້ວຊາບ ເພື່ອພິຈາລະນາ ແລະ ຊີ້ນຳການຈັດຕັ້ງປະຕິບັດທັນເວລາ.

6. ຄຳສັ່ງແນະນຳສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ຄຳສັ່ງແນະນຳໃດທີ່ຂັດກັບຄຳສັ່ງແນະນຳສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ເຈົ້າແຂວງບໍ່ແກ້ວ

ດຣ.ຄຳພັນ ເຜີຍຍະວົງ